# ຄວາມເປັນມາ ການສະເຫຼີມສະຫຼອງວັນເດັກ

ວັນເດັກແຕ່ລະປີ ແມ່ນເຫດການພິເສດໜຶ່ງທີ່ມີຄວາມໝາຍຕໍ່ເດັກ ຈຸດປະສົງແນໃສ່ຊຸກຍູ້ສົ່ງເສີມ, ພັດທະນາ ແລະ ປົກປ້ອງເດັກ ໃນທົ່ວໂລກ; ຍ້ອນເຫັນໄດ້ຄວາມສຳຄັນຂອງເດັກ ທີ່ເປັນອານາຄົດຂອງຊາດ, ເປັນເມັດພືດ, ເປັນໜໍ່ແໜງທົນຮອນແຫ່ງຊີວິດໃນມື້ນີ້ ເພື່ອກາຍເປັນອະນາຄົດອັນແຈ່ມໃສຂອງປະເທດຊາດໃນມື້ໜ້າ, ບັນດາປະຊາຊາດໃນທົ່ວໂລກ ຈຶ່ງໄດ້ສະເຫຼີມສະຫຼອງວັນເດັກສາກົນ ຕາມເງື່ອນໄຂ ແລະ ສະພາບຕົວຈິງຂອງປະເທດຕົນ.

## I. ການສະເຫຼີມສະຫຼອງວັນເດັກໃນສາກົນ

ປະຈຸບັນໃນທົ່ວໂລກ ກໍຄື ສປປ ລາວ ໄດ້ກຳນົດເອົາການສະເຫຼີມສະຫຼອງວັນເດັກ ມີ 03 ວັນ ຄື: ວັນເດັກສາກົນ (ວັນທີ 1 ມິຖຸນາ), ວັນເດັກຈັກກະວານ ຫຼື ວັນເດັກໂລກ (20 ພະຈິກ) ແລະ ວັນເດັກແຫ່ງຊາດ ຫຼື ວັນຄອບຄົວແຫ່ງຊາດ (ຕາມແຕ່ລະປະເທດກຳນົດ).

### 1.1 ວັນເດັກສາກົນ ວັນທີ 1 ມິຖຸນາ (International Children's Day):

ເລີ່ມເມື່ອປີ 1924 ກອງປະຊຸມສະມັດຊາໃຫຍ່ຂອງສັນນິບາດນາໆຊາດ, ໃນວັນທີ 16 ກັນຍາ 1924 ໄດ້ຮັບຮອງເອົາ "ຖະແຫຼງການເຊີແນວ ກ່ຽວກັບສິດທິຂອງເດັກ" ເປັນຄັ້ງທຳອິດ ຊຶ່ງໄດ້ປະກາດວ່າ ເດັກມີຄວາມຕ້ອງການໃນການປ້ອງກັນ ແລະ ດູແລເບິ່ງແຍງເປັນພິເສດ ລວມທັງການຊຸກຍູ້ ສົ່ງເສີມ, ພັດທະນາ ແລະ ປົກປ້ອງທີ່ເໝາະສົມທາງດ້ານກົດໝາຍແກ່ເດັກກ່ອນເກີດ ແລະ ຫຼັງເກີດ ຍ້ອນວ່າ ເດັກຍັງບໍ່ທັນມີວຸດທິພາວະທີ່ສົມບູນຄົບຖ້ວນທາງດ້ານຮ່າງກາຍ ແລະ ຈິດໃຈ. ປີຕໍ່ມາກອງປະຊຸມໂລກຄັ້ງທຳອິດ ເພື່ອຄວາມເປັນຢູ່ທີ່ດີຂອງເດັກ ໄດ້ຖືກຈັດຂຶ້ນຢູ່ທີ່ເຊີແນວ, ປະເທດສະວິດເຊີແລນ ໃນວັນທີ 1 ມິຖຸນາ 1925 ແລະ ກໍໄດ້ປະກາດເອົາວັນດັ່ງກ່າວເປັນວັນເດັກສາກົນ. ມາຮອດເດືອນພະຈິກ 1949 ກອງປະຊຸມໃຫຍ່ຂອງສະຫະພັນແມ່ຍິງປະຊາທິປະໄຕສາກົນ, ທີ່ນະຄອນຫຼວງມົດສະກູ, ສະຫະພາບໂຊຫວຽດ ໄດ້ປະກາດເອົາ ວັນທີ 1 ມິຖຸນາ ເປັນວັນເດັກສາກົນອີກເທື່ອໜຶ່ງ ຈຸດປະສົງແມ່ນເພື່ອຊຸກຍູ້ ສົ່ງເສີມ, ພັດທະນາ ແລະ ປົກປ້ອງເດັກ. ການສະເຫຼີມສະຫຼອງວັນເດັກສາກົນ ຈະມີການອອກບົດປາໄສ ກ່ຽວກັບ ສິດທິ, ຄວາມເປັນຢູ່ທີ່ດີຂອງເດັກ ແລະ ການດຳເນີນກິດຈະກຳຕ່າງໆເພື່ອເດັກ.

ບັນດາປະເທດທົ່ວໂລກ ທີ່ກຳນົດເອົາວັນເດັກສາກົນ ວັນທີ 1 ມິຖຸນາ ເປັນການສະເຫຼີມສະຫຼອງວັນເດັກປະກອບມີເຊັ່ນ: ປະເທດອາເມນີ, ອາແຊກບາຍຈານ, ບູນກາລີ, ອານບານີ, ອັງໂລກາ, ສປ ຈີນ, ສ. ເຊັກສ໌, ລັດເຊຍ ແລະ ບັນດາປະເທດອາດີດ ສະຫະພາບໂຊວຽດ, ເອກົວດໍ, ສະຫະພັນເຢຍລະມັນ, ສປປ ລາວ, ມຽນມາ, ມົງໂກລີ, ນິກາຣາກົວ, ເຢແມນ, ໂກໂຊໂວ, ປາກີສະຖານ, ໂປໂລຍ, ກຳປູເຈຍ, ປອກຕູການ, ກີນີ-ບີຊາວ, ຕີມໍຕາແລສເຕ, ອັງໂກລາ, ໂມຊຳບິກ, ຣູມານີ, ສະໂລວາກີ, ອູແກຣນ, ສສ. ຫວຽດນາມ ແລະ ອື່ນໆ.

### 1.2 ວັນເດັກຈັກກະວານ ຫຼື ວັນເດັກໂລກວັນທີ 20 ພະຈິກ (Universal Children's Day / World Children's Day ):

ເມື່ອປີ 1954 ກອງປະຊຸມສະມັດຊາໃຫຍ່ຂອງອົງການສະຫະປະຊາຊາດ ໃນວັນທີ 14 ທັນວາ 1954 ໄດ້ມີຍັດຕິເລກທີ 836 (IX) ທີ່ແນະນຳໃຫ້ທຸກປະເທດໃນໂລກ ສ້າງຕັ້ງວັນເດັກຈັກກະວານ ຫຼື ວັນເດັກໂລກ ຂຶ້ນໂດຍຖືເອົາວັນດັ່ງກ່າວ ເປັນວັນໂຮມຊຸມນຸມປອງດອງສາມັກຄີ (ການບໍ່ຈຳແນກເດັກ) ແລະ ຄວາມເຂົ້າໃຈຊຶ່ງກັນ ແລະ ກັນ ລະຫວ່າງເດັກໃນຂອບເຂດທົ່ວໂລກ; ວັນດັ່ງກ່າວແນໃສ່ສົ່ງເສີມອຸດົມການ ແລະ ກຳນົດເປົ້າໝາຍກົດບັດ

ສະຫະປະຊາຊາດ ເພື່ອສົ່ງເສີມສະຫວັດດີການສໍາລັບເດັກ ແລະ ເລີ່ມຈັດຕັ້ງປະຕິບັດແຕ່ປີ 1956 ເປັນຕົ້ນມາ; ສ່ວນວັນເວລາ ແລະ ຮູບການອີງໃສ່ສະພາບ ແລະ ຄວາມເໝາະສົມຂອງແຕ່ລະປະເທດ.

ກອງປະຊຸມຂອງສະມັດຊາໃຫຍ່ ອົງການສະຫະປະຊາຊາດ ໃນວັນທີ 20 ພະຈິກ 1959 ໄດ້ມີຍັດຕິເລກທີ 1386 (XIV) ຖະແຫຼງ ກ່ຽວກັບ ສິດທິຂອງເດັກ ຈຸດປະສົງ ເພື່ອຮັບປະກັນໃຫ້ເດັກ ໄດ້ຮັບສິດເສລີພາບ ແລະ ມີໄວທີ່ເຕັມໄປດ້ວຍຄວາມຜາສຸກໃນດ້ານຕ່າງໆ ຕາມຖະແຫຼງການດັ່ງກ່າວ; ນອກຈາກນັ້ນ, ຖະແຫຼງການຍັງຖືເປັນຫຼັກການພື້ນຖານໃຫ້ປະເທດຕ່າງໆໃນໂລກ ຖືເອົາສິດທິເດັກ ເປັນຈຸດເລີ່ມຕົ້ນໃນການພິຈາລະນາ, ຮັບຮອງເອົານະໂຍບາຍ ແລະ ນິຕິກໍາຕ່າງໆ ກ່ຽວກັບ ຜົນປະໂຫຍດຂອງເດັກ, ຂອງສັງຄົມ ແລະ ເພີ່ມຄວາມເອົາໃຈໃສ່ປັບປຸງເງື່ອນໄຂຊີວິດການເປັນຢູ່ຂອງເດັກໃຫ້ດີຂຶ້ນໃນປະເທດຂອງຕົນ.

ກອງປະຊຸມຂອງສະມັດຊາໃຫຍ່ຂອງອົງການສະຫະປະຊາຊາດ ໃນວັນທີ 20 ພະຈິກ 1989 ໄດ້ມີຍັດຕິເລກທີ 44/25 ໂດຍຮັບຮອງເອົາສົນທິສັນຍາ ວ່າດ້ວຍສິດທິເດັກ ແລະ ແນະນໍາກໍານົດເອົາວັນທີ 20 ພະຈິກຂອງທຸກປີ ເປັນວັນເດັກຈັກກະວານ ຫລື ວັນເດັກໂລກ ເນື່ອງຈາກວ່າເປັນວັນທີ່ກອງປະຊຸມຂອງສະມັດຊາໃຫຍ່ອົງການສະຫະປະຊາຊາດ ໄດ້ປະກາດຖະແຫຼງການ ກ່ຽວກັບສິດທິເດັກ ໃນວັນທີ 20 ພະຈິກ 1959 ແລະ ຮັບຮອງເອົາສົນທິສັນຍາ ວ່າດ້ວຍສິດທິເດັກ ໃນວັນທີ 20 ພະຈິກ 1989 ໂດຍໃຫ້ເລີ່ມຈັດຕັ້ງປະຕິບັດ ນັບແຕ່ປີ 1990 ເປັນຕົ້ນມາ ແລະ ຖືເອົາວັນດັ່ງກ່າວເປັນວັນສິດທິຂອງເດັກ.

ຖະແຫຼງການ ສິດທິເດັກ ແລະ ສົນທິສັນຍາ ວ່າດ້ວຍສິດທິເດັກ ແມ່ນອີງໃສ່ຄວາມເຄົາລົບກົດບັດສະຫະປະຊາຊາດ ທີ່ຮັບຮູ້ວ່າມະນຸດທຸກຄົນລວມທັງເດັກ ລ້ວນແຕ່ມີກຽດສັກສີ ແລະ ມີສິດທິເທົ່າທຽມກັນ ຊຶ່ງບໍ່ສາມາດຕັດແຍກອອກຈາກກັນໄດ້.

ບັນດາປະເທດທີ່ສະເຫຼີມສະຫຼອງ ວັນເດັກຈັກກະວານ ຫຼື ວັນເດັກໂລກ 20 ພະຈິກ ເປັນຕົ້ນ: ປະເທດການາດາ, ເອຢິບ, ແຟັງລັງ, ສະຫະພັນເຢຍລະມັນ, ອິກລັງ, ອິສະຣາແອລ, ປາກີສະຖານ, ຊູແອັດ, ຕຣີນິດັດ, ໂຕບັກໂກ, ສປປ ລາວ ແລະ ອື່ນໆ.

### 1.3 ວັນເດັກແຫ່ງຊາດ / ວັນຄອບຄົວແຫ່ງຊາດ (National Children’s Day / Family’s Day):

ບັນດາປະເທດໃນໂລກຈໍານວນໜຶ່ງ ໄດ້ມີການສະເຫຼີມສະຫຼອງວັນເດັກແຫ່ງຊາດຂອງປະເທດຕົນ ເຊັ່ນ: ອາກຊັງຕິນ (11 ສິງຫາ), ອິສຕາລີ (14 ກໍລະກົດ), ບັງກລາເທດ (15 ມີນາ), ບຣາຊິລ (12 ຕຸລາ), ຍີ່ປຸ່ນ (05 ພຶດສະພາ), ມາເລເຊຍ (26 ຕຸລາ), ໄທ (ວັນເສົາ-ອາທິດທີ 02 ຂອງເດືອນມັງກອນ) ແລະ ສປປ ລາວ (24 ທັນວາ).

## II. ການສະເຫຼີມສະຫຼອງວັນເດັກ ໃນ ສປປ ລາວ

ສປປ ລາວ ໄດ້ສະເຫຼີມສະຫຼອງວັນເດັກ ໃນ 02 ວັນຄື: ວັນເດັກສາກົນ ວັນທີ 1 ມິຖຸນາ ແລະ ວັນເດັກຈັກກະວານ ຫຼື ວັນເດັກໂລກ ວັນທີ 20 ພະຈິກ (ວັນສົນທິສັນຍາ ວ່າດ້ວຍສິດທິເດັກ) ໃນແຕ່ລະປີ ຈຸດປະສົງເນັ້ນໃສ່ການສົ່ງເສີມການມີສ່ວນຮ່ວມ, ການພັດທະນາ ແລະ ປົກປ້ອງເດັກ, ໂດຍມີບັນດາກິດຈະກໍາຕ່າງໆ ເພື່ອທົບທວນຄວາມຄືບໜ້າ, ການສົ່ງເສີມ ແລະ ພັດທະນາທັກສະຕ່າງໆໃຫ້ເດັກ ພ້ອມທັງຄັດເລືອກເອົາຕົວແທນເດັກ ແລະ ໄວໜຸ່ມ ເພື່ອເຂົ້າຮ່ວມຂະບວນການສະເຫຼີມສະຫຼອງ ໃນລະດັບປະເທດ, ພາກພື້ນ ແລະ ສາກົນ.

### 2.1 ການສະເຫຼີມສະຫຼອງວັນເດັກສາກົນ (1 ມິຖຸນາ)

ພວກເຮົາມີມູນເຊື້ອສະເຫຼີມສະຫຼອງວັນເດັກສາກົນ (1 ມິຖຸນາ) ແຕ່ສະໄໝຕໍ່ສູ້ກູ້ຊາດໃນເມື່ອກ່ອນຈົນເຖິງປະຈຸບັນ ພາຍຫຼັງມີການສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975.

ວັນເດັກສາກົນ (1 ມິຖຸນາ) ຂອງທຸກໆປີ ພວກເຮົາໄດ້ຈັດກິດຈະກຳຕ່າງໆ ເພື່ອໂຄສະນາເຜີຍແຜ່ຢ່າງກວ້າງຂວາງທາງກວ້າງ ແລະ ທາງເລິກ ກ່ຽວກັບ ແນວທາງນະໂຍບາຍຂອງພັກ-ລັດ, ບັນດານິຕິກຳພາຍໃນ ກໍຄືສົນທິສັນຍາສາກົນ ແລະ ພາກພື້ນຕ່າງໆທີ່ພົວພັນເຖິງເດັກ ເປັນຕົ້ນ ສົນທິສັນຍາ ວ່າດ້ວຍສິດທິເດັກ ແລະ ອະນຸສັນຍາທີ່ກ່ຽວຂ້ອງ ຜ່ານສື່ສັງຄົມຕ່າງໆ ກໍຄືສ້າງຂະບວນການຢ່າງຫຼາຍຮູບຫຼາຍສີ ແນໃສ່ປູກຈິດສຳນຶກທີ່ຖືກຕ້ອງໃນທົ່ວສັງຄົມ ກ່ຽວກັບສິດທິຂອງເດັກ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນຕໍ່ເດັກ ເພື່ອຮັບປະກັນໃຫ້ເດັກ ການມີຊີວິດ, ຢູ່ລອດ, ການພັດທະນາ, ການປົກປ້ອງ ແລະ ການມີສ່ວນຮ່ວມ ຂອງເດັກລາວບັນດາເຜົ່າ ໃຫ້ມີໄວເດັກທີ່ເຕັມໄປດ້ວຍຄວາມຜາສຸກ, ຄວາມອົບອຸ່ນ ແລະ ການດູແລເບິ່ງແຍງເປັນຢ່າງດີຈາກພໍ່-ແມ່, ຍາດຕິພີ່ນ້ອງໃນຄອບຄົວ, ສັງຄົມ ແລະ ການຈັດຕັ້ງທຸກຂັ້ນ ເພື່ອປ່ຽນແປງຈິນຕະນາການອັນເກົ່າແກ່ຫຼ້າຫຼັງ ແລະ ຮີດຄອງປະເພນີດັ່ງເດີມທີ່ຍັງຫຼົງເຫຼືອຢູ່ໃນຈິດສຳນຶກຂອງຄົນຈຳນວນໜຶ່ງໃນສັງຄົມ ທີ່ບໍ່ເຫັນຄວາມສຳຄັນຂອງເດັກ ໃນການປັບປຸງສະຖາບັນຄອບຄົວ ໂດຍໃຫ້ໂອກາດເທົ່າທຽມກັນ ລະຫວ່າງ ເດັກຍິງ ແລະ ເດັກຊາຍ; ຍິ່ງໄປກວ່ານັ້ນ, ຍັງໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ການຂົ້າຮ່ວມຄ້າຂາຍຢາເສບຕິດໃນກຸ່ມເດັກ, ການຄ້າຂາຍເດັກ, ການຄ້າປະເວນີ ແລະ ສິ່ງລາມົກອານາຈານ ກ່ຽວກັບ ເດັກ ກໍຄືການຂູດຮີດແຮງງານເດັກ.

ວັນເດັກສາກົນ (1 ມິຖຸນາ) ຍັງແມ່ນວັນໜຶ່ງທີ່ພວກເຮົາຕ້ອງໄດ້ຄຳນຶ່ງເຖິງກຸ່ມເດັກທີ່ດ້ອຍໂອກາດ ເຊັ່ນ: ເດັກພິການ, ເດັກກຳພ້າກຳພອຍ, ເດັກທີ່ຖືກປະຖິ້ມ, ເດັກຂ້າງຖະໜົນ, ເດັກທີ່ຢູ່ໃນກຸ່ມສ່ຽງ, ເດັກຢູ່ເຂດທຸກຍາກ ແລະ ເຂດຫ່າງໄກສອກຫຼີກ ໃຫ້ມີສິດ, ຜົນປະໂຫຍດ ແລະ ການມີສ່ວນຮ່ວມຢ່າງເຕັມສ່ວນໃນທຸກກິດຈະກຳປົກກະຕິຂອງເດັກໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນການພັດທະນາ ແລະ ການຂະຫຍາຍຕົວຢ່າງແຂງແຮງຕາມເສດຖະກິດຂອງຊາດ ແລະ ໄປທົ່ວເຖິງເດັກທຸກຄົນໃນສັງຄົມ.

ໃນປີ 2024 ນີ້, ວັນເດັກສາກົນ (1 ມິຖຸນາ) ການສະເຫຼີມສະຫຼອງກໍ່ຄືທີ່ຜ່ານມາ ມີການຈັດຕັ້ງເຜີຍແຜ່ສານທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ເອກະສານທີ່ກ່ຽວຂ້ອງກັບເດັກ ແລະ ຄຳຂວັນວັນເດັກຄືທຸກໆປີ, ເຊິ່ງປີນີ້ແມ່ນພາຍໃຕ້ຄຳຂວັນ "ສ້າງອະນາຄົດທີ່ຍືນຍົງ ຄືການສ້າງຄວາມເຂັ້ມແຂງໃຫ້ແກ່ເດັກ" **(Empowering Children Building a Sustainable Future)**.

## 2.2 ການສະເຫຼີມສະຫຼອງວັນເດັກຈັກກະວານ ຫຼື ວັນເດັກໂລກ ວັນທີ 20 ພະຈິກ

ໃນປີ 2014 ທົ່ວໂລກມີການສະເຫຼີມສະຫຼອງໃຫຍ່ ເນື່ອງໃນໂອກາດວັນສົນທິສັນຍາ ວ່າດ້ວຍສິດທິເດັກຄົບ ຮອບ 25 ປີ (20 ພະຈິກ 1989 - 20 ພະຈິກ 2014) ຊຶ່ງ ສປປ ລາວ ກໍໄດ້ຮ່ວມກັນສະເຫຼີມສະຫຼອງວັນດັ່ງກ່າວເຊັ່ນກັນ ໂດຍມີການເຂົ້າຮ່ວມຂອງ ທ່ານ ອາຊາງ ລາວລີ, ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ປະທານຄະນະກຳມາທິການ ເພື່ອແມ່ແລະເດັກ ແຫ່ງຊາດ ໝາກຜົນຂອງການສະເຫຼີມສະຫຼອງຄັ້ງນີ້ ສະແດງໃຫ້ເຫັນຜົນສຳເລັດ, ບົດຮຽນ ແລະ ສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດສົນທິສັນຍາຕ່າງໆ ທີ່ກ່ຽວຂ້ອງກັບສິດທິເດັກ ໃນໄລຍະ 25 ຜ່ານມາ ເປັນຕົ້ນ ອັດຕາການຕາຍຂອງເດັກອ່ອນຫຼຸດລົງ, ອັດຕາການເຂົ້າໂຮງຮຽນຂອງເດັກເພີ່ມຂຶ້ນ, ເດັກຍິງໄດ້ຮັບໂອກາດດ້ານສຶກສາທີ່ດີຂຶ້ນ, ເດັກໄດ້ຮັບການປົກປ້ອງ ແລະ ເຂົ້າຮ່ວມທຸກວຽກງານທີ່ກ່ຽວຂ້ອງກັບເດັກ. ນອກຈາກນັ້ນ, ຍັງສະແດງໃຫ້ເຫັນບັນຫາສິ່ງທ້າທາຍ ກ່ຽວກັບເດັກ ທີ່ຈຳເປັນ

ຕ້ອງໄດ້ຮັບການປັບປຸງ ແລະ ແກ້ໄຂຢ່າງຮີບດ່ວນ ເພື່ອຮັບປະກັນໃຫ້ເດັກທຸກຄົນ ໄດ້ຮັບສິດ, ໄດ້ຮັບການພັດທະນາທີ່ເທົ່າທຽມກັນໃນສັງຄົມ ແລະ ໃນທົ່ວໂລກ.

ໃນປີ 2018, ໄດ້ຈັດພິທີຍ່າງເພື່ອສຸຂະພາບຢູ່ທີ່ປະຕູໄຊ ໂດຍການເຂົ້າຮ່ວມຂອງ ທ່ານ ສອນໄຊ ສີພັນດອນ, ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ປະທານຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ແລະ ການນຳຂັ້ນກະຊວງ/ອົງການ, ອົງການຈັດຕັ້ງສາກົນ, ຄູອາຈານ, ນັກຮຽນ ແລະ ມວນຊົນທົ່ວໄປເຂົ້າຮ່ວມ. ໃນຕອນຄ່ຳກໍໄດ້ມີການຍ້ອມໄຟສີຟ້າໃສ່ປະຕູໄຊ ນັບແຕ່ເວລາ 18:00 ໂມງຫາ 00:00 ໂມງທ່ຽງຄືນ ຂອງວັນທີ 20 ພະຈິກ 2018 ເພື່ອສະແດງເຖິງເຄື່ອງໝາຍ ແລະ ສັນຍາລັກ ກ່ຽວກັບ ສິດທິເດັກ ໄປພ້ອມກັນທົ່ວໂລກໃນໂອກາດວັນດັ່ງກ່າວ.

ໃນປີ 2019, ກໍໄດ້ມີພິທີສະເຫຼີມສະຫຼອງໃຫຍ່ ຮ່ວມກັບບັນດາປະຊາຊາດທົ່ວໂລກ ໃນ 197 ປະເທດທີ່ເປັນພາຄີຂອງສົນທິສັນຍາດັ່ງກ່າວ ໃນໂອກາດສະເຫຼີມສະຫຼອງວັນຄົບຮອບ 30 ປີ ຂອງສົນທິສັນຍາ ວ່າດ້ວຍສິດທິເດັກ (20 ພະຈິກ 1989–20 ພະຈິກ 2019) ແລະ ວັນຖະແຫຼງການ ວ່າດ້ວຍສິດທິເດັກ ຄົບຮອບ 60 ປີ ໂດຍການເຂົ້າຮ່ວມຂອງ ທ່ານ ທອງລຸນ ສີສຸລິດ, ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ ແລະ ໄດ້ມີການຍ້ອງຍໍຜົນງານໃຫ້ການຈັດຕັ້ງພາກຂັ້ນສູນກາງ, ທ້ອງຖິ່ນ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ທີ່ຈັດຕັ້ງປະຕິບັດວຽກສິດທິເດັກຢູ່ ສປປ ລາວ ແລະ ຈັດກອງປະຊຸມລະດັບສູງ ເພື່ອທົບທວນ ແລະ ຕີລາຄາຄືນໝາກຜົນການຈັດຕັງປະຕິບັດສົນທິສັນຍາ ວ່າດ້ວຍສິດທິເດັກ ໄລຍະ 30 ປີທີ່ຜ່ານມາ ແລະ ແຜນພັດທະນາເດັກລາວ ລຸ້ນປີ 2030, ຕິດພັນຄວາມໝາຍໝັ້ນການລຶບລ້າງຄວາມທຸກຍາກຂອງເດັກໃນຫຼາຍມິຕິ ແລະ ການຊຸກຍູ້, ສົ່ງເສີມສິດທິເດັກ ຈາກບັນດາທ່ານຮອງເຈົ້າແຂວງ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມ ແລະ ພາກທຸລະກິດເອກະຊົນ ທີ່ຈະລົງທຶນໃສ່ການຈັດຕັ້ງປະຕິບັດ ສົນທິສັນຍາ ວ່າດ້ວຍສິດທິເດັກ ໂດຍນຳໃຊ້ກາລະໂອກາດ ພັດທະນາທ່າແຮງຂອງເດັກລາວບັນດາເຜົ່າ ແຕ່ນີ້ຮອດປີ 2030 ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ ເພື່ອຫຼຸດຜ່ອນຄວາມທຸກຍາກຂອງເດັກ (ເປົ້າໝາຍທີ 1.2).

ໃນປີ 2020, ການສະເຫຼີມສະຫຼອງວັນດັ່ງກ່າວ ໄດ້ມີການຍ້ອມໄຟສີຟ້າໃສ່ຕຶກກະຊວງສາທາລະນະສຸກ ແລະ ຕຶກໂຮງຮຽນ ມສ ມິດຕະພາບລາວ-ຫວຽດນາມ ແຕ່ເວລາ 18:00 ໂມງຫາ 00:00 ໂມງ ໃນວັນທີ 20 ພະຈິກ 2020 ໂດຍການເຂົ້າຮ່ວມຂອງ ທ່ານ ອາລຸນແກ້ວ ກິດຕິຄຸນ, ລັດຖະມົນຕີ ປະຈຳ ສຳນັກງານນາຍົກລັດຖະມົນຕີ, ຮອງປະທານຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ພ້ອມທັງມີການນຳບັນດາກະຊວງ/ອົງການ ທີ່ກ່ຽວຂ້ອງ ລວມທັງຕົວແທນເດັກເຂົ້າຮ່ວມ.

ໃນປີ 2021, ພິທີສະເຫຼີມສະຫຼອງວັນເດັກໂລກ ຫຼື ວັນສົນທິສັນຍາ ວ່າດ້ວຍສິດທິເດັກ ແມ່ນບໍ່ສາມາດຈັດໄດ້ ເນື່ອງຈາກສະພາບການລະບາດຂອງພະຍາດໂຄວິດ 19.

ໃນປີ 2022, ການສະເຫຼີມສະຫຼອງວັນດັ່ງກ່າວ ໄດ້ມີກິດຈະກຳຍ່າງເພື່ອສຸຂະພາບ ໂດຍການເຂົ້າຮ່ວມຂອງພະນະ ທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ, ຮອງນາຍົກລັດຖະມົນຕີ, ປະທານ ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ທີ່ເດີ່ນສະພາແຫ່ງຊາດ, ກິດຈະກຳສະແດງຄວາມສາມາດຂອງເດັກ ໂດຍການເປັນປະທານຂອງ ທ່ານ ນາງ ຂັນທະລີ ສີລິພົງພັນ, ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ, ກຳມະການ ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ແລະ ພິທີຍ້ອມໄຟສີຟ້າ

ໃສ່ປະຕູໄຊ ແຕ່ເວລາ 18:00 ໂມງ ຫາ 00:00 ໂມງ ຂອງວັນທີ 20 ພະຈິກ 2022 ໂດຍການເຂົ້າຮ່ວມເປັນປະທານຂອງ ທ່ານ ນາງ ທິບພະກອນ ຈັນທະວົງສາ, ຮອງລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຮອງປະທານຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ພ້ອມທັງມີການນຳບັນດາກະຊວງ/ອົງການ ທີ່ກ່ຽວຂ້ອງ ລວມທັງຕົວແທນເດັກເຂົ້າຮ່ວມ.

ໃນປີ 2023 ທີ່ຜ່ານມາ, ໄດ້ຈັດກອງປະຊຸມທົບທວນວຽກສິດທິເດັກຢູ່ ສປປ ລາວ ໂດຍການເປັນປະທານຂອງພະນະທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ, ຮອງນາຍົກລັດຖະມົນຕີ, ປະທານ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ເພື່ອຕິດຕາມການຈັດຕັ້ງປະຕິບັດ ຂອງ ບັນດາທ່ານ ຮອງເຈົ້າແຂວງທັງ 17 ແຂວງ ແລະ 01 ນະຄອນຫຼວງວຽງຈັນ; ຕາງໜ້າຄູ່ຮ່ວມພັດທະນາ; ຕາງໜ້າອົງການຈັດຕັ້ງທາງສັງຄົມ ແລະ ຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ຕາງໜ້າພາກສ່ວນທຸລະກິດເອກະຊົນ ຂຶ້ນລາຍງານຄວາມຄືບໜ້າໃນວຽກງານດັ່ງກ່າວ ແລະ ພິເສດ ໃນພິທີສະເຫຼີມສະຫຼອງວັນເດັກໂລກ (20 ພະຈິກ) ໄດ້ມີການຍ້ອມໄຟສີຟ້າໃສ່ປະຕູໄຊ ເປັນເວລາ 03 ວັນ ແຕ່ເວລາ 18:00 ໂມງ ຫາ 00:00 ໂມງ ຂອງວັນທີ 20-22 ພະຈິກ 2023 ໂດຍການເຂົ້າຮ່ວມເປັນປະທານຂອງ ທ່ານ ນາງ ອາລີ ວົງໜໍ່ບຸນທຳ, ປະທານ ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ຮອງປະທານ ຜູ້ປະຈຳການ ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ພ້ອມທັງການນຳບັນດາກະຊວງ/ອົງການ, ສະຖານທູດ, ອົງການຈັດຕັ້ງສາກົນ ລວມທັງຕົວແທນເດັກ ຈາກ 17 ແຂວງ ແລະ 01 ນະຄອນຫຼວງ ແລະ ພໍ່ແມ່ປະຊາຊົນທົ່ວໄປທີ່ຢູ່ໃນບໍລິເວນປະຕູໄຊດັ່ງກ່າວ.

ໃນປີ 2024 ນີ້ ສປປ ລາວ ກໍ່ໄດ້ມີຜົນສຳເລັດໃນການປະກາດ ຫ້າມການລົງໂທດທາງຮ່າງກາຍ ດ້ວຍການຂ້ຽນຕີ ເປັນປະເທດທຳອິດໃນອາຊຽນ ແລະ ເປັນປະເທດທີ 66 ຂອງໂລກ ທີ່ກົດໝາຍໄດ້ກຳນົດ ການປົກປ້ອງເດັກ ຈາກທຸກຮູບແບບຂອງການໃຊ້ຄວາມຮຸນແຮງດ້ວຍການຂ້ຽນຕີ, ໃນໂອກາດວັນສາກົນຢຸດຕິການລົງໂທດດ້ວຍການຂ້ຽນຕີ 30 ເມສາ 2024. ສຳຄັນສຸດໃນປີນີ້ ສປປ ລາວ ຈະໄດ້ເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ ກອງປະຊຸມອາຊຽນສຳຄັນປິ່ນອ້ອມຂອງຂະແໜງການ; ພິເສດ ສຳລັບວຽກເດັກ, ພວກເຮົາຈະເປັນເຈົ້າພາບຈັດ ເວທີເດັກອາຊຽນ ຄັ້ງທີ 8 ໂດຍຈະມີຕົວແທນເດັກໃນບັນດາ10 ປະເທດ ສະມາຊິກອາຊຽນ ແລະ ບັນດາຕົວແທນເດັກລາວ 18 ແຂວງ ທົ່ວປະເທດ ເຂົ້າຮ່ວມໂດຍຕົວແທນເດັກທັງ 10 ປະເທດອາຊຽນ ຈະໄດ້ມາຄົ້ນຄວ້າ, ປຶກສາຫາລື, ເອກະພາບ ຮ່ວມກັນສ້າງຂໍ້ສະເໜີແນະ/ຄຳແນະນຳ ໃນຫົວຂໍ້ **“ປະຕິບັດແຜນງານປ່ຽນແປງດິນຟ້າອາກາດທີ່ນຳພາໂດຍເດັກ ເພື່ອສ້າງຄວາມເຂັ້ມແຂງໃນປະຊາຄົມອາຊຽນ” (Children–led Climate change Action Towards a Resilient ASEAN Community)** ເພື່ອສະເໜີຕໍ່ກອງປະຊຸມເຈົ້າໜ້າທີ່ດ້ານສະຫວັດດີການສັງຄົມ ແລະ ການພັດທະນາອາຊຽນ **(SOMSWD);** ກອງປະຊຸມລັດຖະມົນຕີອາຊຽນ ດ້ານສະຫວັດດີການສັງຄົມ ແລະ ການພັດທະນາ **(AMMSWD)** ແລະ ກອງປະຊຸມຄະນະກຳມາທິການອາຊຽນ ເພື່ອປົກປ້ອງ ແລະ ສົ່ງເສີມສິດທິຂອງແມ່ຍິງ ແລະ ສິດທິເດັກ **(ACWC)** ຕາມລະບຽບການ. ນອກຈາກນັ້ນ, ໃນທ້າຍປີນີ້ ພວກເຮົາຈະໄດ້ສະເຫຼີມສະຫຼອງວັນສົນທິສັນຍາ ວ່າດ້ວຍ ສິດທິເດັກ (ວັນເດັກໂລກ 20 ພະຈິກ 2024) ຄົບຮອບ 35 ປີ ໂດຍມີກອງປະຊຸມລະດັບສູງ ເພື່ອທົບທວນການຈັດຕັ້ງປະຕິບັດວຽກສິດທິເດັກ ຢູ່ ສປປ ລາວ ລວມທັງການຕິດຕາມຄວາມຄືບໜ້າຄວາມໝາຍໝັ້ນຂອງພາກສ່ວນຕ່າງໆ ແລະ ແຜນງານພັດທະນາເດັກລາວ ລຸ້ນປີ 2030 ພ້ອມທັງມີກອງປະຊຸມຮ່ວມກັບຕົວແທນເດັກໃນທົ່ວປະເທດ.

ນະຄອນຫຼວງວຽງຈັນ, ວັນທີ 22 ພຶດສະພາ 2024

**ຫ້ອງການ ຄະນະກຳມາທິການແຫ່ງຊາດ**
**ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ**